ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເລກທີ 530 /ປທສ

ນະຄອນຫຼວງວຽງຈັນ, ວັນທີ09 ກຸມພາ 2021

# ຂໍ້ຕົກລົງ
## ວ່າດ້ວຍການຄຸ້ມຄອງເລກໝາຍໂທລະສັບ

- ອີງຕາມ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ(ສະບັບປັບປຸງ) ສະບັບເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ສະບັບເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017.

## ລັດຖະມົນຕີ ອອກຂໍ້ຕົກລົງ:
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາການບໍລິການ ແລະ ການນຳໃຊ້ເລກໝາຍໂທລະສັບ ເພື່ອເຮັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຊຸກຍູ້ສົ່ງເສີມການນຳໃຊ້ເລກໝາຍໂທລະສັບໃຫ້ຖືກຕ້ອງຕາມລະບຽບການ ຮັບປະກັນຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ.

**ມາດຕາ 2 ການຄຸ້ມຄອງເລກໝາຍໂທລະສັບ**

ການຄຸ້ມຄອງເລກໝາຍໂທລະສັບ ແມ່ນ ການຄຸ້ມຄອງ, ຈັດສັນ, ຕິດຕາມ, ກວດກາ ການນຳໃຊ້ເລກໝາຍໂທລະສັບປະເພດຕ່າງໆ ເຊັ່ນ: ລະຫັດປະເທດ, ລະຫັດແຂວງ, ລະຫັດເຄືອຂ່າຍ, ເລກໝາຍໂທລະສັບພິເສດ, ເລກໝາຍໂທລະສັບມືຖື, ເລກໝາຍໂທລະສັບຕັ້ງໂຕະແບບໃຊ້ສາຍ, ເລກໝາຍໂທລະສັບຕັ້ງໂຕະແບບບໍ່ໃຊ້ສາຍ, ລະຫັດ ແລະ ເລກໝາຍໂທລະສັບປະເພດອື່ນ ໃນ ສປປ ລາວ ໃຫ້ຖືກຕ້ອງຕາມແຜນຈັດສັນເລກໝາຍໂທລະຄົມມະນາຄົມທີ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດ ໃນແຕ່ລະໄລຍະ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ໃຫ້ບໍລິການ** ໝາຍເຖິງ ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດສະໜອງບໍລິການໂທລະຄົມມະນາຄົມ ແລະ ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ເລກໝາຍໂທລະສັບ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

2. **ຜູ້ໃຊ້ບໍລິການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂຶ້ນທະບຽນນຳໃຊ້ ຫຼື ໃຊ້ບໍລິການເລກໝາຍໂທລະສັບ ຈາກຜູ້ໃຫ້ບໍລິການ;

3. **ກຸ່ມເລກໝາຍໂທລະສັບ** ໝາຍເຖິງ ກຸ່ມຕົວເລກທີ່ລຽງເປັນລຳດັບຕໍ່ເນື່ອງກັນຕາມແຕ່ລະປະເພດເລກໝາຍໂທລະສັບ ທີ່ໄດ້ກຳນົດໄວ້ເປັນກຸ່ມໃນການອອກອະນຸຍາດຕໍ່ຄັ້ງ;

4. **ເລກໝາຍໂທລະສັບທີ່ເປີດນຳໃຊ້ບໍລິການປົກກະຕິ** ໝາຍເຖິງ ເລກໝາຍໂທລະສັບທີ່ມີການເປີດໃຫ້ບໍລິການໃນລະບົບໂທລະຄົມມະນາຄົມ ແລະ ຍັງເປັນສິດຖືຄອງຂອງຜູ້ໃຊ້ບໍລິການ ປະກອບມີ ເລກໝາຍໂທລະສັບທີ່ສາມາດໂທອອກ ແລະ ຮັບສາຍໄດ້ປົກກະຕິ, ເລກໝາຍໂທລະສັບ ທີ່ປິດການໂທອອກ ແຕ່ຍັງສາມາດຮັບສາຍໄດ້, ແລະ ເລກໝາຍໂທລະສັບທີ່ປິດການໂທອອກ ແລະ ໂທເຂົ້າ ແຕ່ຍັງຢູ່ໃນສິດການຖືຄອງຂອງຜູ້ໃຊ້ບໍລິການ;

5. **ເລກໝາຍໂທລະສັບທີ່ຍັງບໍ່ທັນໄດ້ເປີດບໍລິການ** ໝາຍເຖິງ ເລກໝາຍໂທລະສັບທີ່ໄດ້ຮັບອະນຸຍາດຈາກກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຕ່ຍັງບໍ່ທັນໄດ້ນຳອອກໃຫ້ບໍລິການ ລວມທັງເລກໝາຍໂທລະສັບທີ່ປິດໂທອອກ ແລະ ໂທເຂົ້າ ທີ່ເປັນສິດຖືຄອງຂອງຜູ້ໃຫ້ບໍລິການ;

6. **ລະຫັດປະເທດ** ໝາຍເຖິງ ລະຫັດທີ່ກຳນົດເປັນພື້ນທີ່ ຫຼື ລະບຸຂົງເຂດພູມສາດໃດໜຶ່ງ ຊຶ່ງໃຊ້ເປັນຕົວກຳນົດທິດທາງໃນການຕິດຕໍ່ສື່ສານໃນຂອບເຂດທົ່ວທຸກມຸມໂລກ;

7. **ລະຫັດແຂວງ** ໝາຍເຖິງ ລະຫັດທີ່ກຳນົດຂຶ້ນສະເພາະ ເພື່ອບົ່ງບອກເຖິງຂອບເຂດການບໍລິການໃນຂັ້ນແຂວງ ຫຼື ພື້ນທີ່ໃດໜຶ່ງຂອງເຄືອຂ່າຍລະບົບໂທລະສັບຕັ້ງໂຕະ ແລະ ອື່ນໆ;

8. **ລະຫັດເຄືອຂ່າຍ** ໝາຍເຖິງ ລະຫັດທີ່ກຳນົດຂຶ້ນ ເພື່ອບົ່ງບອກເຖິງປະເພດເຄືອຂ່າຍການບໍລິການ ເປັນຕົ້ນເຄືອຂ່າຍລະບົບໂທລະສັບຕັ້ງໂຕະແບບບໍ່ໃຊ້ສາຍ, ເຄືອຂ່າຍລະບົບໂທລະສັບມືຖື ແລະ ອື່ນໆ;

9. **ເລກໝາຍໂທລະສັບມືຖື** ໝາຍເຖິງ ຊຸດຕົວເລກທີ່ມີຄວາມຍາວ 08 ຕົວເລກ ຊຶ່ງກຳນົດໃຊ້ ເພື່ອການຕິດຕໍ່ສື່ສານລະຫວ່າງເຄືອຂ່າຍໂທລະສັບມືຖື ຫຼື ເຄືອຂ່າຍໂທລະສັບປະເພດອື່ນ ຂອງ ສອງ ຫຼື ຫຼາຍອຸປະກອນສື່ສານ;

10. **ເລກໝາຍໂທລະສັບຕັ້ງໂຕະແບບບໍ່ໃຊ້ສາຍ** ໝາຍເຖິງ ຊຸດຕົວເລກທີ່ມີຄວາມຍາວ 07 ຕົວເລກ ຊຶ່ງກຳນົດໃຊ້ ເພື່ອການຕິດຕໍ່ສື່ສານລະຫວ່າງເຄືອຂ່າຍໂທລະສັບຕັ້ງໂຕະແບບບໍ່ໃຊ້ສາຍ ຫຼື ເຄືອຂ່າຍໂທລະສັບປະເພດອື່ນຂອງສອງ ຫຼື ຫຼາຍອຸປະກອນສື່ສານ;

11. **ເລກໝາຍໂທລະສັບຕັ້ງໂຕະແບບໃຊ້ສາຍ** ໝາຍເຖິງ ຊຸດຕົວເລກທີ່ມີຄວາມຍາວ 06 ຕົວເລກ ຊຶ່ງກຳນົດໃຊ້ ເພື່ອການຕິດຕໍ່ສື່ສານລະຫວ່າງເຄືອຂ່າຍໂທລະສັບຕັ້ງໂຕະແບບໃຊ້ສາຍ ຫຼື ເຄືອຂ່າຍໂທລະສັບປະເພດອື່ນ ຂອງສອງ ຫຼື ຫຼາຍອຸປະກອນສື່ສານ;

12. **ເລກໝາຍໂທລະສັບພິເສດ** ໝາຍເຖິງ ຊຸດເລກໝາຍທີ່ກຳນົດຂຶ້ນເປັນພິເສດ ປະກອບມີຈຳນວນຕົວເລກ, ຕົວໜັງສື ຫຼື ສັນຍາລັກໃດໜຶ່ງ ຫຼື ຫຼາຍຢ່າງຮ່ວມເຂົ້າກັນປະກອບຂຶ້ນເປັນ 01 ຊຸດເລກໝາຍໂທລະສັບທີ່ຈື່ງ່າຍ ແລະ ແຕກຕ່າງຈາກເລກໝາຍໂທລະສັບປະເພດອື່ນ ເພື່ອອຳນວຍຄວາມສະດວກໃນການຕິດຕໍ່ສື່ສານລະຫ່ວາງ ຜູ້ໃຫ້ບໍລິການທີ່ໄດ້ຮັບອະນຸຍາດ ແລະ ຜູ້ໃຊ້ບໍລິການ;

13. ລະຫັດ ແລະ **ເລກໝາຍໂທລະສັບປະເພດອື່ນ** ໝາຍເຖິງ ເລກໝາຍໂທລະສັບປະເພດໜຶ່ງ ທີ່ກຳນົດເປັນຊຸດ ຫຼື ກຸ່ມເລກໝາຍໂທລະສັບ ສຳລັບນຳໃຊ້ບໍລິການສະເພາະໃດໜຶ່ງໃນອານາຄົດ.

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການທີ່ນຳໃຊ້ເລກໝາຍໂທລະສັບຂອງ ສປປ ລາວ.

## ໝວດທີ 2
## ໂຄງສ້າງ ແລະ ຫຼັກການຈັດສັນເລກໝາຍໂທລະສັບ

ມາດຕາ 5 ໂຄງສ້າງເລກໝາຍໂທລະສັບ

ໂຄງສ້າງເລກໝາຍໂທລະສັບ ກຳນົດຂຶ້ນຕາມເອກະສານແນະນຳຂອງສະຫະພາບໂທລະຄົມມະນາຄົມສາກົນ (International Telecommunication Union ຫຼື ITU) ຊຶ່ງມີ ດັ່ງນີ້:

| ລະຫັດເຊື່ອມຕໍ່ສາກົນ (International Trunk) | ລະຫັດປະເທດ (Country Code) | ລະຫັດເຄືອຂ່າຍ/ແຂວງ (National Destination Code) | ເລກໝາຍໂທລະສັບ (Subscriber Number) |
|---|---|---|---|
| 00 | 856 | XX | XXXXXX(X)(X) |

ມາດຕາ 6 ປະເພດເລກໝາຍໂທລະສັບ

ເລກໝາຍໂທລະສັບ ມີ 08 ປະເພດ ດັ່ງນີ້:

1. ລະຫັດປະເທດ;
2. ລະຫັດແຂວງ;
3. ລະຫັດເຄືອຂ່າຍ;
4. ເລກໝາຍໂທລະສັບມືຖື;
5. ເລກໝາຍໂທລະສັບຕັ້ງໂຕະແບບບໍ່ໃຊ້ສາຍ;
6. ເລກໝາຍໂທລະສັບຕັ້ງໂຕະແບບໃຊ້ສາຍ;
7. ເລກໝາຍໂທລະສັບພິເສດ;
8. ລະຫັດ ແລະ ເລກໝາຍໂທລະສັບ ປະເພດອື່ນ.

ມາດຕາ 7 ຫຼັກການຈັດສັນເລກໝາຍໂທລະສັບ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດສັນເລກໝາຍໂທລະສັບ ໃຫ້ຜູ້ໃຫ້ບໍລິການໃນ ສປປ ລາວ ຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແຜນການຈັດສັນເລກໝາຍໂທລະສັບຂອງ ສປປ ລາວ, ຄຳແນະນຳ ແລະ ລະບຽບຂອງອົງການຈັດຕັ້ງສາກົນ;
2. ຮັບປະກັນຄວາມສະເໝີພາບ, ໂປ່ງໃສ, ເປີດເຜີຍ ໃນການແບ່ງປັນ ເລກໝາຍໂທລະສັບ;
3. ຮັບປະກັນການນຳໃຊ້ເລກໝາຍໂທລະສັບໃຫ້ມີປະສິດທິຜົນ, ປະຢັດ, ນຳໃຊ້ຖືກເປົ້າໝາຍ;
4. ຮັບປະກັນສິດທິຜົນປະໂຫຍດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ ເລກໝາຍໂທລະສັບ;

5. ໃຫ້ສິດທິພິເສດໃນການຈັດສັນ, ແບ່ງປັນ ເລກໝາຍໂທລະສັບ ໃຫ້ຜູ້ໃຫ້ບໍລິການທີ່ມີທ່າແຮງໃນການນຳໃຊ້ເລກໝາຍໂທລະສັບ ທີ່ສາມາດສ້າງຜົນປະໂຫຍດສູງສຸດໃຫ້ແກ່ພາກລັດ ແລະ ສັງຄົມ ໂດຍສະເພາະ ໃນຂົງເຂດຊົນນະບົດ, ຫ່າງໄກສອກຫຼີກ, ເຂດຊາຍແດນ ແລະ ເຂດສະພາບເສດຖະກິດຫຍຸ້ງຍາກ ມີທ່າແຮງໃນການນຳໃຊ້ເຕັກໂນໂລຊີໃໝ່, ທັນສະໄໝ, ສາມາດຕອບສະໜອງກັບຄວາມກ້າວໜ້າຂອງເຕັກໂນໂລຊີ ແລະ ການຫັນປ່ຽນຮອບດ້ານຂອງການບໍລິການ.

## ມາດຕາ 8 ແຜນຈັດສັນເລກໝາຍໂທລະສັບ

ແຜນຈັດສັນເລກໝາຍໂທລະສັບ ແມ່ນ ແຜນຈັດສັນທີ່ກຳນົດຮູບແບບ ແລະ ໂຄງສ້າງຂອງລະຫັດ ແລະ ເລກໝາຍໂທລະສັບ ທີ່ນຳໃຊ້ໃນລະບົບເຄືອຂ່າຍໂທລະຄົມມະນາຄົມຢ່າງລະອຽດ.

ຕາຕະລາງຈັດສັນ ແລະ ນຳໃຊ້ເລກໝາຍໂທລະສັບ ແມ່ນ ຈັດສັນຕາມເຕັກໂນໂລຊີ ແລະ ຕາມປະເພດການໃຫ້ບໍລິການດ້ານໂທລະຄົມມະນາຄົມ ເພື່ອເປັນບ່ອນອີງໃນການອອກອະນຸຍາດນຳໃຊ້.

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຄົ້ນຄວ້າ ແລະ ກຳນົດຕາມຫຼັກການສາກົນ ແລະ ສະພາບເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

ແຜນຈັດສັນເລກໝາຍໂທລະສັບ ແມ່ນ ກຳນົດໄວ້ໃນລະບຽບການສະເພາະ.

# ໝວດທີ 3
# ການອະນຸຍາດນຳໃຊ້ເລກໝາຍໂທລະສັບ

## ມາດຕາ 9 ການຂໍອະນຸຍາດນຳໃຊ້ເລກໝາຍໂທລະສັບ

ຜູ້ໃຫ້ບໍລິການ ທີ່ມີຈຸດປະສົງຂໍອະນຸຍາດນຳໃຊ້ເລກໝາຍໂທລະສັບ ເພື່ອໃຫ້ບໍລິການແກ່ຜູ້ໃຊ້ບໍລິການ ຕ້ອງສະເໜີຫາ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໂດຍປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີ ຂໍອະນຸຍາດນຳໃຊ້ເລກໝາຍໂທລະສັບ;

2. ບົດສະຫຼຸບລາຍງານການນຳໃຊ້ເລກໝາຍໂທລະສັບ ທີ່ໄດ້ຮັບອະນຸຍາດຢ່າງລະອຽດ (ກໍລະນີ ຂໍອະນຸຍາດຄັ້ງທີ 02 ຂຶ້ນໄປ);

3. ຄາດຄະເນແຜນການການນຳໃຊ້ເລກໝາຍໂທລະສັບ ຂອງຜູ້ໃຫ້ບໍລິການທີ່ສະເໜີຂໍອະນຸຍາດນຳໃຊ້;

4. ເອກະສານອື່ນ ທີ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໄດ້ກຳນົດໄວ້ ໃນແຕ່ລະໄລຍະ.

## ມາດຕາ 10 ຫຼັກການອອກອະນຸຍາດເລກໝາຍໂທລະສັບ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ພິຈາລະນາອອກອະນຸຍາດເລກໝາຍໂທລະສັບໃຫ້ຜູ້ໃຫ້ບໍລິການນຳໃຊ້ ດັ່ງນີ້:

1. ພິຈາລະນາອອກອະນຸຍາດ ໃຫ້ຜູ້ມີໃບອະນຸຍາດດຳເນີນທຸລະກິດດ້ານໂທລະຄົມມະນາຄົມ ທີ່ສອດຄ່ອງກັບການນຳໃຊ້ເລກໝາຍໂທລະສັບແຕ່ລະປະເພດ ແລະ ຜູ້ທີ່ມີຄວາມຈຳເປັນນຳໃຊ້ເລກໝາຍໂທລະສັບໃນການບໍລິການ;

2. ການອອກອະນຸຍາດເລກໝາຍໂທລະສັບຕໍ່ຄັ້ງ ແມ່ນຈັດສັນເປັນກຸ່ມເລກໝາຍໂທລະສັບ ດັ່ງນີ້:

1) ສຳລັບເລກໝາຍໂທລະສັບມືຖື ແມ່ນອອກອະນຸຍາດຕ່ຳສຸດ 50,000 ເລກໝາຍ ແລະ ສູງສຸດ 500,000 ເລກໝາຍ;

2) ສຳລັບເລກໝາຍໂທລະສັບຕັ້ງໂຕະແບບບໍ່ໃຊ້ສາຍ ແມ່ນອອກອະນຸຍາດ ຕ່ຳສຸດ 5,000 ເລກໝາຍ ແລະ ສູງສຸດ 500,000 ເລກໝາຍ;

3) ສຳລັບເລກໝາຍໂທລະສັບຕັ້ງໂຕະແບບໃຊ້ສາຍ ແມ່ນອອກອະນຸຍາດຕ່ຳສຸດ 1,000 ເລກໝາຍ ແລະ ສູງສຸດ 100,000 ເລກໝາຍ;

3. ໃນການຂໍອະນຸຍາດຄັ້ງທີ 02 ຂຶ້ນໄປ, ຜູ້ໃຫ້ບໍລິການຈະໄດ້ຮັບການພິຈາລະນາອອກອະນຸຍາດ ກໍຕໍ່ເມື່ອບໍລິມາດ ຂອງເລກໝາຍທີ່ໄດ້ຮັບອະນຸຍາດໄປກ່ອນແລ້ວນັ້ນ ຕ້ອງຖືກເປີດນຳໃຊ້ຫຼາຍກ່ວາ 70% ຂຶ້ນໄປ ແລະ ຈຳນວນເລກໝາຍໂທລະສັບທີ່ເປີດນຳໃຊ້ ຕ້ອງໄດ້ຂຶ້ນທະບຽນທັງໝົດ ຜ່ານລະບົບຂອງ ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ສຳເລັດ 100%. ສຳລັບລະຫັດແຂວງ, ລະຫັດເຄືອຂ່າຍ ແລະ ເລກໝາຍໂທລະສັບພິເສດ ຕ້ອງໄດ້ເປີດນຳໃຊ້ທັງໝົດ ຈຶ່ງຈະພິຈາລະນາອອກອະນຸຍາດເລກໝາຍໂທລະສັບເພີ່ມໃໝ່;

4. ເປີເຊັນບໍລິມາດການເປີດນຳໃຊ້ເລກໝາຍໂທລະສັບ ເທົ່າກັບຈຳນວນເລກໝາຍໂທລະສັບທີ່ເປີດນຳໃຊ້ບໍລິການປົກກະຕິທັງໝົດ ຫານ ໃຫ້ຈຳນວນເລກໝາຍໂທລະສັບທີ່ໄດ້ຮັບອະນຸຍາດທັງໝົດ ຄູນ ໃຫ້ 100%;

5. ໃບອະນຸຍາດເລກໝາຍໂທລະສັບ ມີອາຍຸ 01 ປີ ນັບແຕ່ ວັນທີ 01 ມັງກອນ ຫາ 31 ທັນວາ ຂອງແຕ່ລະປີ;

6. ຫຼັກການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4
## ການປ່ຽນກຸ່ມ, ສົ່ງຄືນ, ເກັບຄືນ ແລະ ການລາຍງານຂໍ້ມູນການນຳໃຊ້ເລກໝາຍໂທລະສັບ

### ມາດຕາ 11 ການປ່ຽນກຸ່ມເລກໝາຍໂທລະສັບທີ່ນຳໃຊ້

ຜູ້ໃຫ້ບໍລິການ ທີ່ຕ້ອງການປ່ຽນກຸ່ມເລກໝາຍໂທລະສັບ ແຕ່ບໍ່ໄດ້ປ່ຽນແປງຄວາມຍາວ ຫຼື ໂຄງສ້າງຂອງເລກໝາຍໂທລະສັບ ໃຫ້ປະຕິບັດ ດັ່ງນີ້:

1. ສະເໜີຫາ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຂໍປ່ຽນແປງກຸ່ມເລກໝາຍໂທລະສັບ;

2. ແຜນການປ່ຽນແປງກຸ່ມເລກໝາຍໂທລະສັບ ປະກອບມີເນື້ອໃນພື້ນຖານ ເປັນຕົ້ນ ຂອບເຂດ, ຈຳນວນເລກໝາຍໂທລະສັບທີ່ຕ້ອງການປ່ຽນແປງ, ໄລຍະເວລາທົດລອງ ແລະ ຈັດຕັ້ງປະຕິບັດ, ວິທີການທາງດ້ານເຕັກນິກ, ວິທີການຫຼຸດຜ່ອນການຂາດການຕິດຕໍ່ສື່ສານ ໃນໄລຍະກ່ອນ ແລະ ຫຼັງການປ່ຽນແປງເລກໝາຍໂທລະສັບ;

3. ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈະພິຈາລະນາໃຫ້ປ່ຽນແປງກຸ່ມເລກໝາຍໂທລະສັບ ເມື່ອກຸ່ມເລກໝາຍໂທລະສັບດັ່ງກ່າວ ບໍ່ມີຜູ້ໃຊ້ບໍລິການແລ້ວ;

4. ໃນກໍລະນີ ກຸ່ມເລກໝາຍໂທລະສັບທີ່ຕ້ອງການປ່ຽນກຸ່ມເລກໝາຍໂທລະສັບ ຍັງມີຜູ້ໃຊ້ບໍລິການນັບແຕ່ໜຶ່ງເລກໝາຍຂຶ້ນໄປ, ຜູ້ໃຫ້ບໍລິການ ຕ້ອງມີມາດຕະການທົດແທນທີ່ເໝາະສົມໃຫ້ແກ່ຜູ້ໃຊ້ບໍລິການ ເຊັ່ນ: ການທົດແທນຄ່າເສຍຫາຍ ຫຼື ປ່ຽນແທນເລກໝາຍໂທລະສັບໃຫ້ຜູ້ໃຊ້ບໍລິການ ຕາມການຕົກລົງເຫັນດີເປັນເອກະພາບກັນທັງສອງຝ່າຍ ຢ່າງເປັນລາຍລັກອັກສອນ;

5. ກໍລະນີ ບໍ່ອະນຸຍາດໃຫ້ປ່ຽນແປງກຸ່ມເລກໝາຍໂທລະສັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຈ້ງຕອບເປັນລາຍລັກອັກສອນ ພ້ອມລະບຸສາເຫດທີ່ບໍ່ອະນຸຍາດໃຫ້ຜູ້ຂໍອະນຸຍາດຮັບຊາບ ພາຍໃນ ສິບຫ້າ ວັນ ນັບແຕ່ມື້ໄດ້ຮັບເອກະສານຄົບຖ້ວນ;

6. ອາຍຸໃບອະນຸຍາດກຸ່ມເລກໝາຍໂທລະສັບທີ່ປ່ຽນແທນໃຫ້ ແມ່ນນັບຕາມອາຍຸໃບອະນຸຍາດທີ່ອອກໃນເບື້ອງຕົ້ນ ແລະ ຕ້ອງໄດ້ຊໍາລະຄ່າທໍານຽມອອກໃບອະນຸຍາດຄືນໃໝ່;

7. ກຸ່ມເລກໝາຍໂທລະສັບ ທີ່ສະເໜີຂໍປ່ຽນ ຫຼັງຈາກໄດ້ຮັບອະນຸຍາດ ຫົກ ເດືອນ ຂຶ້ນໄປ;

8. ກຸ່ມເລກໝາຍໂທລະສັບທີ່ສະເໜີປ່ຽນແປງ ຕ້ອງລຽງລໍາດັບເປັນກຸ່ມຕໍ່າສຸດ ຕາມຫຼັກການທີ່ໄດ້ຈັດສັນເລກໝາຍໂທລະສັບ ທີ່ລະບຸໄວ້ໃນ ຂໍ້ 02 ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 12 ການສົ່ງຄືນເລກໝາຍໂທລະສັບ**

ຜູ້ໃຫ້ບໍລິການ ທີ່ຕ້ອງການສົ່ງຄືນເລກໝາຍໂທລະສັບທີ່ໄດ້ຮັບອະນຸຍາດຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສະເໜີຫາ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ຄັດຕິດເອກະສານລາຍງານສະພາບການນໍາໃຊ້ເລກໝາຍໂທລະສັບ ໃນປະຈຸບັນ ຕາມທີ່ໄດ້ລະບຸໄວ້ໃນຂໍ້ 2 ຫາ 4 ຂອງ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

2. ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈະພິຈາລະນາຮັບຄືນເລກໝາຍໂທລະສັບ ເມື່ອກຸ່ມເລກໝາຍໂທລະສັບດັ່ງກ່າວບໍ່ມີຜູ້ໃຊ້ບໍລິການແລ້ວ;

3. ໃນກໍລະນີ ກຸ່ມເລກໝາຍໂທລະສັບທີ່ຕ້ອງການສົ່ງຄືນ ຍັງມີຜູ້ໃຊ້ບໍລິການນັບແຕ່ໜຶ່ງເລກໝາຍໂທລະສັບຂຶ້ນໄປ, ຜູ້ໃຫ້ບໍລິການ ຕ້ອງມີມາດຕະການທົດແທນທີ່ເໝາະສົມໃຫ້ແກ່ຜູ້ໃຊ້ບໍລິການ ເຊັ່ນ: ການທົດແທນຄ່າເສຍຫາຍ ຫຼື ປ່ຽນແທນເລກໝາຍໂທລະສັບໃຫ້ຜູ້ໃຊ້ບໍລິການ ຕາມການຕົກລົງເຫັນດີເປັນເອກະພາບກັນທັງສອງຝ່າຍ ຢ່າງເປັນລາຍລັກອັກສອນ;

4. ຜູ້ໃຫ້ບໍລິການຕ້ອງຊໍາລະຄ່າທໍານຽມ ແລະ ຄ່າບໍລິການ ຂອງກຸ່ມເລກໝາຍໂທລະສັບ ທີ່ສະເໜີສົ່ງຄືນໃຫ້ຄົບຖ້ວນ ຕາມຈໍານວນຂອງປີສະເໜີສົ່ງຄືນ ແລະ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈະບໍ່ພິຈາລະນາສົ່ງຄືນຄ່າທໍານຽມ ແລະ ຄ່າບໍລິການ ທີ່ໄດ້ຊໍາລະໄປແລ້ວໃນທຸກກໍລະນີ ທີ່ສະເໜີຂໍສົ່ງຄືນ;

5. ກໍລະນີປະຕິເສດ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຈ້ງຕອບ ແລະ ລະບຸສາເຫດທີ່ປະຕິເສດການສົ່ງຄືນເລກໝາຍໂທລະສັບດັ່ງກ່າວ ເປັນລາຍລັກອັກສອນ ພາຍໃນໄລຍະເວລາ ສິບຫ້າ ວັນລັດຖະການນັບແຕ່ໄດ້ຮັບເອກະສານຄົບຖ້ວນ;

6. ສາມາດສະເໜີຂໍສົ່ງຄືນກຸ່ມເລກໝາຍໂທລະສັບໄດ້ ຫຼັງຈາກໄດ້ຮັບອະນຸຍາດ ຫົກ ເດືອນ ຂຶ້ນໄປ;

7. ຜູ້ໃຫ້ບໍລິການ ຕ້ອງຢຸດສະໜອງບໍລິການກຸ່ມເລກໝາຍໂທລະສັບດັ່ງກ່າວ ນັບແຕ່ມື້ໄດ້ຮັບການເຫັນດີຮັບສົ່ງຄືນ ເລກໝາຍໂທລະສັບ;

8. ກຸ່ມເລກໝາຍໂທລະສັບທີ່ສະເໜີສົ່ງຄືນ ຕ້ອງລຽງລໍາດັບເປັນກຸ່ມຕໍ່າສຸດ ຕາມຫຼັກການທີ່ໄດ້ຈັດສັນເລກໝາຍໂທລະສັບ ທີ່ລະບຸໄວ້ໃນ ຂໍ້ 02 ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;

9. ຜູ້ໃຫ້ບໍລິການອອກບົດແນະນໍາສະເພາະໃຫ້ຜູ້ໃຊ້ບໍລິການຂອງຕົນ ກໍລະນີ ຜູ້ໃຊ້ບໍລິການຕ້ອງການສົ່ງຄືນເລກໝາຍໂທລະສັບ ທີ່ນໍາໃຊ້.

ມາດຕາ 13 ການເກັບຄືນເລກໝາຍໂທລະສັບ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກຂໍ້ຕົກລົງເກັບຄືນເລກໝາຍໂທລະສັບ ຈາກຜູ້ໃຫ້ບໍລິການ ໃນກໍລະນີ ດັ່ງນີ້:

1. ເພື່ອຮັບໃຊ້ວຽກຕາມແຜນພັດທະນາຂອງຂະແໜງການ, ວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ;

2. ການນໍາໃຊ້ເລກໝາຍໂທລະສັບດັ່ງກ່າວ ບໍ່ສອດຄ່ອງກັບປະເພດກິດຈະການທີ່ໄດ້ຮັບອະນຸຍາດ ຫຼື ແຜນຈັດສັນເລກໝາຍໂທລະສັບ ທີ່ວາງອອກ;

3. ບໍ່ຊໍາລະ ຄ່າທໍານຽມ ແລະ ຄ່າບໍລິການ ນໍາໃຊ້ເລກໝາຍໂທລະສັບ ຕາມກົດໝາຍ ແລະ ລະບຽບການ ຫຼັງຈາກທີ່ໄດ້ຮັບໃບສັ່ງມອບ ແລະ ໃບຄິດໄລ່ ພາຍໃນ ສາມສິບ ວັນ;

4. ບໍ່ຕໍ່ອາຍຸຂອງໃບອະນຸຍາດນໍາໃຊ້ເລກໝາຍໂທລະສັບທຸກປະເພດ ຫຼັງຈາກໝົດອາຍຸການນໍາໃຊ້ພາຍໃນ 30 ວັນ;

5. ຖືກເກັບຄືນໃບອະນຸຍາດໃຫ້ບໍລິການດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ.

6. ລັດຈະປ່ຽນແທນເລກໝາຍໂທລະສັບໃຫ້ຜູ້ໃຫ້ບໍລິການຕາມທີ່ລະບຸໄວ້ໃນ ຂໍ້ 1 ຂອງມາດຕານີ້;

7. ຜູ້ໃຫ້ບໍລິການຕ້ອງແທນຄືນຄ່າເສຍຫາຍ ໃຫ້ຜູ້ໃຊ້ບໍລິການ ກໍລະນີຖືກເກັບຄືນເລກໝາຍໂທລະສັບຕາມທີ່ລະບຸໄວ້ໃນ ຂໍ້ 2, 3 ແລະ 4 ຂອງມາດຕານີ້ ຕາມການຕົກລົງເຫັນດີເປັນເອກະພາບກັນທັງສອງຝ່າຍຢ່າງເປັນລາຍລັກອັກສອນ;

8. ຜູ້ໃຫ້ບໍລິການອອກບົດແນະນໍາສະເພາະໃຫ້ຜູ້ໃຊ້ບໍລິການຂອງຕົນ ກ່ຽວກັບເງື່ອນໄຂການເກັບຄືນເລກໝາຍໂທລະສັບ, ວັດຖຸ ແລະ ອຸປະກອນສະໜອງບໍລິການ ທີ່ບໍລິສັດສະໜອງໃຫ້;

9. ອົງການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ຕ້ອງຢຸດການນໍາໃຊ້ເລກໝາຍໂທລະສັບດັ່ງກ່າວ ນັບແຕ່ມື້ໄດ້ຮັບການເຫັນດີເກັບຄືນເລກໝາຍໂທລະສັບ ແລະ ຮັບປະກັນສິດ, ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນອື່ນ ທີ່ກ່ຽວຂ້ອງຕາມກົດໝາຍ ແລະ ລະບຽບການກໍານົດ.

ມາດຕາ 14 ການລາຍງານຂໍ້ມູນການນໍາໃຊ້ເລກໝາຍໂທລະສັບ

ການລາຍງານຂໍ້ມູນການນໍາໃຊ້ເລກໝາຍໂທລະສັບ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຜູ້ໃຫ້ບໍລິການທີ່ໄດ້ຮັບອະນຸຍາດນໍາໃຊ້ເລກໝາຍໂທລະສັບ ຕ້ອງລາຍງານຫາ ອົງການຄຸ້ມຄອງກໍາກັບ... ອົງການດັດສົມໂທລະຄົມມະນາຄົມ, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນປະຈໍາໄຕມາດ ໂດຍໃຫ້ສົ່ງໃນອາທິດທີໜຶ່ງ ຂອງໄຕມາດຖັດໄປ ດ້ວຍຮູບແບບ ເປັນລາຍລັກອັກສອນ ແລະ ເປັນຮູບແບບເອເລັກໂຕຣນິກ;

2. ຜູ້ໃຫ້ບໍລິການທີ່ໄດ້ຮັບການຈັດສັນເລກໝາຍໂທລະສັບ ຕ້ອງຮັບຜິດຊອບຄວາມຖືກຕ້ອງ, ຊັດເຈນຂອງຂໍ້ມູນທີ່ລາຍງານມາໃຫ້ ອົງການດັດສົມໂທລະຄົມມະນາຄົມ ແລະ ໃຫ້ທັນຕາມໄລຍະເວລາທີ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກໍານົດ. ໃນກໍລະນີ ທີ່ຈໍາເປັນ, ຜູ້ໃຫ້ບໍລິການ ຕ້ອງພິສູດ ແລະ ຢັ້ງຢືນຄວາມຖືກຕ້ອງ, ຊັດເຈນຂອງຂໍ້ມູນລາຍງານ;

3. ໃນກໍລະນີທີ່ຈໍາເປັນ ຜູ້ໃຫ້ບໍລິການ ຕ້ອງລາຍງານຂໍ້ມູນການນໍາໃຊ້ເລກໝາຍໂທລະສັບ ຕາມການແຈ້ງການ ຂອງກະຊວງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອຕິດຕາມ ແລະ ກວດກາ ການນໍາໃຊ້ເລກໝາຍໂທລະສັບ ເປັນແຕ່ລະໄລຍະ.

## ໝວດທີ 5
## ສິດ ແລະ ພັນທະຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ

ມາດຕາ 15 ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການ

ຜູ້ໃຫ້ບໍລິການ ມີສິດ ແລະ ພັນທະ ດັ່ງນີ້:

1. ຂຶ້ນທະບຽນການນຳໃຊ້ເລກໝາຍໂທລະສັບ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;

2. ປິດຖາວອນ ເລກໝາຍໂທລະສັບມືຖື ແລະ ຕັ້ງໂຕະແບບບໍ່ໃຊ້ສາຍ ໃນກໍລະນີເລກໝາຍໂທລະສັບດັ່ງກ່າວ ບໍ່ມີການຂຶ້ນທະບຽນການນຳໃຊ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ປິດການນຳໃຊ້ສຳລັບເລກໝາຍໂທລະສັບມືຖືແບບຕື່ມເງິນ ແລະ ຕັ້ງໂຕະແບບບໍ່ໃຊ້ສາຍ, ກໍລະນີບໍ່ເຄື່ອນໄຫວ ຫຼື ຊຳລະຄ່ານຳໃຊ້ພາຍໃນເວລາ ເກົ້າສິບ ວັນຕໍ່ເນື່ອງ;

4. ປິດການນຳໃຊ້ໂທອອກເລກໝາຍໂທລະສັບມືຖືແບບເສຍຄ່າເຊົ່າລາຍເດືອນ ກໍລະນີບໍ່ຊຳລະຄ່ານຳໃຊ້ໃນເວລາ ເກົ້າສິບ ວັນ ຕໍ່ເນື່ອງ ຫຼື ຫຼັງຈາກໄດ້ແຈ້ງເຕືອນຜູ້ໃຊ້ບໍລິການແລ້ວ;

5. ສາມາດຈຳໜ່າຍຕໍ່ ເລກໝາຍໂທລະສັບທີ່ປິດຖາວອນ ໃຫ້ຜູ້ໃຊ້ບໍລິການອື່ນທີ່ມີຄວາມຕ້ອງການນຳໃຊ້ເລກໝາຍໂທລະສັບດັ່ງກ່າວ ຕາມທີ່ໄດ້ລະບຸໄວ້ ໃນ ຂໍ້ 1, 2 ,3 ຂອງມາດຕານີ້ ຫຼັງຈາກໄລຍະເວລາ ເກົ້າສິບ ວັນນັບແຕ່ວັນທີ ປິດຖາວອນເລກໝາຍໂທລະສັບ;

6. ນຳໃຊ້ຂໍ້ມູນຜູ້ໃຊ້ບໍລິການ ເພື່ອການຂະຫຍາຍເຄືອຂ່າຍ ແລະ ການພັດທະນາການບໍລິການຂອງຕົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຜູ້ໃຊ້ບໍລິການ;

7. ບໍລິຫານຈັດການ ແລະ ນຳໃຊ້ເລກໝາຍໂທລະສັບທີ່ໄດ້ຮັບອະນຸຍາດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

8. ຕິດຕາມ, ກວດກາ ສະພາບການນຳໃຊ້ ຂອງເລກໝາຍໂທລະສັບຂອງຕົນ ໃນແຕ່ລະໄລຍະ;

9. ສະໜອງຂໍ້ມູນລາຍລະອຽດການນຳໃຊ້ ໃຫ້ແກ່ເຈົ້າຂອງເລກໝາຍໂທລະສັບທີ່ໄດ້ຂຶ້ນທະບຽນຖືກຕ້ອງຄົບຖ້ວນ;

10. ສະໜອງຂໍ້ມູນກ່ຽວກັບເລກໝາຍໂທລະສັບ ເພື່ອຮັບໃຊ້ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບຕາມຂໍ້ຕົກລົງຂອງຄະນະຮັບຜິດຊອບຈາກ ກະຊວງປ້ອງກັນຊາດ, ກະຊວງປ້ອງກັນຄວາມສະຫງົບ ໃຫ້ສະດວກ, ວ່ອງໄວ ແລະ ທັນກັບສະພາບການ ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງໃນແຕ່ລະໄລຍະ;

11. ສະໜອງຂໍ້ມູນກ່ຽວກັບເລກໝາຍໂທລະສັບ ຕາມການສະເໜີຂອງພາກສ່ວນອື່ນ ທີ່ໄດ້ຮັບການເຫັນດີຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

12. ຊຳລະຄ່າທຳນຽມ ແລະ ຄ່າບໍລິການເລກໝາຍໂທລະສັບ ຕາມກົດໝາຍ ແລະ ລະບຽບການ;

13. ສະຫຼຸບ ແລະ ລາຍງານການນຳໃຊ້ເລກໝາຍໂທລະສັບ ໃຫ້ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນປະຈຳແຕ່ລະໄຕມາດ;

14. ໃຫ້ເຊື່ອມຕໍ່ຖານຂໍ້ມູນການນຳໃຊ້ເລກໝາຍໂທລະສັບກັບລະບົບທີ່ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ພັດທະນາຂຶ້ນຕາມຄວາມຕ້ອງການຂອງໜ້າວຽກໃນແຕ່ລະໄລຍະ;

15. ທົດແທນຄືນມູນຄ່າເສຍຫາຍ ແລະ ປ່ຽນແທນເລກໝາຍໂທລະສັບໃຫ້ຜູ້ໃຊ້ບໍລິການ ຕາມການຕົກລົງກັນໃນກໍລະນີມີການປ່ຽນກຸ່ມ, ສົ່ງຄືນ ແລະ ຖືກເກັບຄືນເລກໝາຍໂທລະສັບ ຕາມກົດໝາຍ ແລະ ລະບຽບການ;

16. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 16 ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການມີສິດ ແລະ ພັນທະ ດັ່ງນີ້:

1. ຂຶ້ນທະບຽນການນໍາໃຊ້ເລກໝາຍໂທລະສັບ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການທີ່ກໍານົດໄວ້;
2. ເລືອກໃຊ້ບໍລິການເຄືອຂ່າຍໂທລະຄົມມະນາຄົມໃນ ສປປ ລາວ;
3. ສະເໜີຂໍຂໍ້ມູນລາຍລະອຽດການນໍາໃຊ້ເລກໝາຍໂທລະສັບຂອງຕົນເອງ;
4. ໄດ້ຮັບບໍລິການໂທລະຄົມມະນາຄົມທີ່ມີຄຸນນະພາບ;
5. ເຂົ້າເຖິງເນື້ອໃນຂໍ້ມູນການໂຄສະນາ ດ້ານການບໍລິການໂທລະຄົມມະນາຄົມ ທີ່ຖືກຕ້ອງ ແລະ ຄົບຖ້ວນ;
6. ໄດ້ຮັບການປົກປ້ອງຂໍ້ມູນເລກໝາຍໂທລະສັບຂອງຕົນຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ;
7. ປະຕິເສດນໍາໃຊ້ບໍລິການໂທລະຄົມມະນາຄົມ ສ່ວນໜຶ່ງ ຫຼື ທັງໝົດ ຕາມທີ່ລະບຸໃນສັນຍາ;
8. ຮັບຜິດຊອບ ທຸກເລກໝາຍໂທລະສັບທີ່ຂຶ້ນທະບຽນທີ່ອອກຊື່ຕົນ ຕໍ່ໜ້າກົດໝາຍ;
9. ຮັບຜິດຊອບຊໍາລະຄ່າເຊົ່າ ແລະ ຄ່າຊົມໃຊ້ບໍລິການ ຢ່າງເປັນປົກກະຕິ;
10. ກໍລະນີ ເລກໝາຍໂທລະສັບຕົກເຮ່ຍ, ເສຍຫາຍ ຫຼື ປ່ຽນແປງການນໍາໃຊ້ ຕ້ອງແຈ້ງຕໍ່ຜູ້ໃຫ້ບໍລິການ ຢ່າງເປັນທາງການ;
11. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຂໍ້ຫ້າມ ແລະ ມາດຕະການປັບໃໝ

**ມາດຕາ 17 ຂໍ້ຫ້າມສໍາລັບຜູ້ໃຫ້ບໍລິການ**

ຫ້າມຜູ້ໃຫ້ບໍລິການ ມີພຶດຕິກໍາ ດັ່ງນີ້:

1. ເປີດບໍລິການເລກໝາຍໂທລະສັບ ກ່ອນໄດ້ຮັບອະນຸຍາດຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
2. ເປີດບໍລິການນໍາໃຊ້ເລກໝາຍໂທລະສັບ ທີ່ບໍ່ຂຶ້ນທະບຽນການນໍາໃຊ້ເລກໝາຍໂທລະສັບ;
3. ຈໍາໜ່າຍເລກໝາຍໂທລະສັບຂອງຕ່າງປະເທດ;
4. ບໍ່ສະແດງເລກໝາຍໂທລະສັບ;
5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 18 ຂໍ້ຫ້າມສໍາລັບຜູ້ໃຊ້ບໍລິການ**

ຫ້າມຜູ້ໃຊ້ບໍລິການ ມີພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ເລກໝາຍໂທລະສັບຕົນເອງໄປສ້າງຄວາມວຸ້ນວາຍ, ປັ່ນປ່ວນ ແລະ ກໍ່ຄວາມບໍ່ສະຫງົບໃຫ້ແກ່ສັງຄົມທີ່ຂັດກັບກົດໝາຍ ແລະ ບຽບການ ຂອງວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;

2. ນໍາໃຊ້ເລກໝາຍໂທລະສັບຂອງຕົນ ໄປໃຫ້ບໍລິການເປັນສູນກາງໂທອອກຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ;

3. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 19 ມາດຕະການປັບໃໝ**

ຜູ້ໃຫ້ບໍລິການທີ່ຈະຖືກປະຕິບັດມາດຕະການປັບໃໝ ໃນກໍລະນີທີ່ເປີດນໍາໃຊ້ເລກໝາຍໂທລະສັບ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກກ່າວເຕືອນ ແລະ ປັບໃໝ 02 ເທົ່າ ຂອງອັດຕາ ຄ່າທໍານຽມ ແລະ ຄ່າບໍລິການ ທີ່ກໍານົດໄວ້ໃນລັດຖະບັນຍັດປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ;

2. ຄັ້ງທີສອງ ຈະຖືກກ່າວເຕືອນ ແລະ ປັບໃໝ 05 ເທົ່າ ຂອງອັດຕາ ຄ່າທໍານຽມ ແລະ ຄ່າບໍລິການ ທີ່ກໍານົດໄວ້ໃນລັດຖະບັນຍັດປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ;

3. ຄັ້ງທີສາມ ຈະຖືກປັບໃໝ 10 ເທົ່າ ຂອງອັດຕາ ຄ່າທໍານຽມ ແລະ ຄ່າບໍລິການ ທີ່ກໍານົດໄວ້ໃນລັດຖະບັນຍັດປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ ພ້ອມທັງຖອນເລກໝາຍໂທລະສັບ ແລະ ໃບອະນຸຍາດໃຫ້ບໍລິການທີ່ນໍາໃຊ້ເລກໝາຍໂທລະສັບປະເພດດັ່ງກ່າວ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາເລກໝາຍໂທລະສັບ

**ມາດຕາ 20 ອົງການການຄຸ້ມຄອງ ແລະ ກວດກາເລກໝາຍໂທລະສັບ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຄຸ້ມຄອງ ແລະ ກວດກາວຽກງານເລກໝາຍໂທລະສັບຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ອົງການດັດສົມໂທລະຄົມມະນາຄົມ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງອົງການດັດສົມໂທລະຄົມມະນາຄົມ**

ໃນການຄຸ້ມຄອງ ແລະ ກວດກາເລກໝາຍໂທລະສັບ ອົງການດັດສົມໂທລະຄົມມະນາຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສະເໜີຄະນະນໍາ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອພິຈາລະນາຮັບຮອງ ລະບຽບການຄຸ້ມຄອງເລກໝາຍໂທລະສັບ ແລະ ແຜນຈັດສັນເລກໝາຍໂທລະສັບ ໃຫ້ຜູ້ໃຫ້ບໍລິການ ໃນແຕ່ລະໄລຍະ;

2. ຄົ້ນຄວ້າ ພິຈາລະນາ ອອກອະນຸຍາດນໍາໃຊ້ເລກໝາຍໂທລະສັບໃຫ້ ຜູ້ໃຫ້ບໍລິການ;

3. ຄົ້ນຄວ້າ ພິຈາລະນາເກັບຄືນ, ຮັບຄືນ, ປ່ຽນກຸ່ມ ຫຼື ປະຕິເສດການສົ່ງຄືນ, ການຂໍປ່ຽນກຸ່ມ ເລກໝາຍໂທລະສັບຈາກຜູ້ໃຫ້ບໍລິການ;

4. ຕິດຕາມ ແລະ ກວດກາ ການນຳໃຊ້ເລກໝາຍໂທລະສັບ ໃຫ້ຖືກຕ້ອງຕາມລະບຽບການ;

5. ເກັບກຳຂໍ້ມູນການນຳໃຊ້ເລກໝາຍໂທລະສັບ ຈາກຜູ້ໃຫ້ບໍລິການໂທລະຄົມມະນາຄົມ;

6. ລາຍງານສະພາບການນຳໃຊ້ເລກໝາຍໂທລະສັບ ໃຫ້ຄະນະນຳ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ;

7. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝ ຕໍ່ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້;

8. ເກັບຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານເລກໝາຍໂທລະສັບ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

9. ສາມາດເຂົ້າເຖິງຖານຂໍ້ມູນການນຳໃຊ້ເລກໝາຍໂທລະສັບ ຕາມຄວາມຕ້ອງການຂອງໜ້າວຽກໃນແຕ່ລະໄລຍະ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະນຳ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ ອົງການດັດສົມໂທລະຄົມມະນາຄົມ, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງເລກໝາຍໂທລະສັບ ສະບັບເລກທີ 023/ປທສ, ລົງວັນທີ 8 ມັງກອນ 2015.

**ລັດຖະມົນຕີ**

ທັນສະໄໝ ກົມມະສິດ